ຜົນກະທົບ ແລະ ແນວທາງຫລຸດຜ່ອນ ມົນລະພິດ ທາງອາກາດ ໃນຂະແໜງກະສິກຳ

ກອງປະຊຸມສ້າງຄວາມຮູ້ ແລະ ປຶກສາຫາລືກ່ຽວກັບການວິເຄາະຂະແໜງການ ກ່ຽວຂ້ອງທີ່ຕິດພັນກັບການສ້າງແຜນດຳເນີນງານອາກາດປອດໃສ

ວັນທີ 27-28 ສິງຫາ 2024 ທີ ແຂວງຫລວງພະບາງ

ນຳສະເໜີໂດຍ: ກະຊວງກະສິກຳ ແລະ ປ່າໄມ້

ມົນລະພິດທາງອາກາດທີ່ເກີດຈາກຂະແໜງກະສິກຳ









ການຖາງ ແລະ ຈູດເພື່ອບຸກເບີກພື້ນທີ່ປູກພືດ, ລ້ຽງສັດ ແລະ ລ່າສັດ

ໄຟໄໝ້ປ່າໄມ້



ມົນລະພິດທາງອາກາດທີ່ເກີດຈາກຂະແໜງປູກຝັງ



ຈຸດພາຍຫລັງເກັບກ່ຽວ ແລະ ຈຸດພັດສະດຸທີ່ຮັບໃຊ້ໃນການປູກ

ມົນລະພິດທາງອາກາດທີ່ເກີດຈາກຂະແໜງກະສິກຳ







https://www.rfa.org/lao/daily/environmen


ຈຸດພາຍຫລັງເກັບກ່ຽວ ແລະ ຈຸດພັດສະດຸທີ່ຮັບໃຊ້ໃນການປູກ


ນິຕິກຳ ທີ່ກ່ຽວຂ້ອງເພື່ອຄຸ້ມຄອງ ແລະ ຫລຸດຜ່ອນມົນລະພິດທາງອາກາດ





ນິຕິກຳ ທີ່ກ່ຽວຂ້ອງເພື່ອຄຸ້ມຄອງ ແລະ ຫລຸດຜ່ອນມົນລະພິດທາງອາກາດ





ນິຕິກຳ ທີ່ກ່ຽວຂ້ອງເພື່ອຄຸ້ມຄອງ ແລະ ຫລຸດຜ່ອນມົນລະພິດທາງ ອາກາດກ່ຽວກັບວຽກງານປ່າໄມ້

1. ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ)

2. ແຈ້ງການ ລັດຖະມົນຕີ ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບ ສະກັດກັ້ນ,
ຕ້ານໄຟໄໝ້ລາມປ່າ ແລະ ການບຸກລຸກພື້ນທີ່ ປ່າໄມ້ ປີ 2024 ໂດຍຜັນຂະຫຍາຍ
ແລະ ຈັດຕັ້ງປະຕິບັດ ຄຳສັ່ງ 11/ນຍ ມາເປັນ

- ຜົນສຳເລັດໄລຍະຜ່ານມາ ໃນທ່ວປະເທດ ໃນນັ້ນ ກະສິກຳອິນຊີ 108 ຫ໊ວໜ່ວຍ, ມີ 538 ຄອບຄົວ, ກວມເອົາ 7 ແຂວງ, ມີເນື້ອທ່ີ 53,745 ຮຕ ແລະ ກະສິກາທ່ີດີ ມີ 180 ຫ໊ວໜ່ວຍ, ມີ 1,138 ຄອບຄົວ, ກວມເອົາ 17 ແຂວງ, ມີເນ້ືອທ່ີ 2,343 ຮຕ
- ສຳລັບ ພືດຢັ້ງຢືນ ປະກອບມີ ເຂ້ົາ, ຖ່ົວ, ພືດສະໝູນໄພ, ພືດຜັກ, ໄມ້ກິນໝາກ, ກາເຟ ແລະ ຜະລິດຕະພັນກາເຟ, ໃບຊາສົດ ແລະ ຜະລິດຕະພັນຊາ (ຊາຂຽວ, ຊາແດງ), ເມັດໝາກມ່ວງຫິມະພານຕາກ ແຫ້ງ, ເສ້ັນໄໝ ແລະ ອ້ອຍ.
- ຜົນສຳເລັດໄລຍະຜ່ານມາ ມີບໍລິສັດມາລົງທຶນເພ່ືອສ໊ກສາການຊ໊ືຂາຍ ກາກບອນ ຈຳນວນ 3 ບໍລິສັດ ພືດທ່ີກຳນົດແມ່ນເຂ້ົາ

1. ບໍລິສັດໂຄເຊ ຄາຍແມດ ຈາກປະເທດອິນເດຍ,
2. ບໍລິສັດໄລຟາມມ່ິງ ຈາກປະເທດມາເລເຊຍ,
3. ບໍລິສັດ ນ້ຳຕານມິດລາວ ຈາກປະເທດໄທ.

- ແຜນການຄາດຄະເນ (2026-2030) ຂອງກົມປູກຝັງ ໃນນັ້ນ ເນື້ອທີ່ກະສິກຳສະອາດ (ອິນຊີ ແລະ ທີ່ດີ) ໃຫ້ໄດ້ຫຼາຍກວ່າ 56,088 ຮຕ, ອອກໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ ໃຫ້ແກ່ຜູ້ຜະລິດ, ຜູ້ປະກອບການ ໄດ້ທັງ ໝົດ 288 ຫົວໜ່ວຍ, ມີ 1,676 ຄອບຄົວ.

ວຽກງານການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄຳສັ່ງ 11/ນຍ

ແຈ້ງການ ລັດຖະມົນຕີ ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບ ສະກັດກັ້ນ, ຕ້ານໄຟໄໝ້ລາມປ່າ ແລະ ການບຸກລຸກພື້ນທີ່ ປ່າໄມ້ ປີ 2024



ການປະເມີນຄວາມເສຍຫາຍ ຈາກໄຟໄໝ້ລາມປ່າ ໃນຂອບເຂດທົ່ວປະເທດ 2014-2023

- ສະພາບການໄຟໄໝ້ລາມປ່າ ທີ່ເກີດຂຶ້ນຢູ່ ສປປ ລາວ ປີ 2023 ທີ່ ປະເມີນຈາກຈຸດສະສົມຄວາມຮ້ອນ (**Hotspots**) ໂດຍນຳໃຊ້ພາບຖ່າຍດາວທຽມ;
- ເນື້ອທີ່ ທີ່ຖືກກະທົບຈາກໄຟໄໝ້ລາມປ່າໃນ 10 ປີ ຜ່ານມາ ໃນຂອບເຂດທົ່ວປະເທດມີທັງໝົດປະມານ 448.000 (ສີ່ຮ້ອຍ ສີ່ສິບແປດພັນ) ເຮັກຕາ; ໝາຍວ່າ ປີ ໜຶ່ງ 44.200 ເຮັກຕາ.
- ສະເພາະໃນປີ 2023 ມີເນື້ອທີ່ ທີ່ຖືກກະທົບຈາກໄຟໄໝ້ລາມປ່າທັງໝົດ ໃນຂອບເຂດທົ່ວປະເທດມີ ປະມານ 122.200 (ໜຶ່ງແສນ ຊາວສອງພັນ ສອງຮ້ອຍ) ເຮັກຕາ;
- ເນື້ອທີ່ ທີ່ຖືກກະທົບຫຼາຍກ່ວາສິບພັນເຮັກຕາຂຶ້ນໄປ ສະເພາະປີ 2023 ແມ່ນ ແຂວງ ໄຊຍະບູລີ, ຫຼວງພະບາງ, ອັດຕະປື, ຈຳປາສັກ ແລະ ຄຳມ່ວນ ຕາມລຳດັບ
- ສາເຫດຕົ້ນຕໍທີ່ພາໃຫ້ເກີດໄຟໄໝ້ລາມປ່າ ແມ່ນ ສ່ວນຫຼາຍເກີດມາຈາກການຈູດ ເພື່ອກະກຽມເນື້ອທີ່ທຳການຜະລິດ ລວມທັງການຈູດ ເພື່ອລ້ຽງສັດ ແລະ ລ່າສັດ.





ວຽກງານຕິດຕາມ ແລະ ເກັບກຳຂໍ້ມູນໄຟໄໝ້ປ່າໄມ້














Code	Province Name	Hotspot	
		Yesterday	Today
1	Vientiane Capital	7	5
2	Phongsaly	0	0
3	Louangnamtha	0	0
4	Oudomxai	3	1
5	Bokeo	0	0
6	Louangphabang	1	4
7	Houaphan	0	1
8	Xaignabouly	19	18
9	Xiengkhouang	4	0
10	Vientiane	27	20
11	Bolikhamxai	15	6
12	Khammouan	11	70
13	Savannakhet	9	46
14	Salavan	3	0
15	Sekong	11	2
16	Champasack	32	10
17	Attapeu	35	17
18	Xaisomboon	7	3
	Total	**184**	**203**

ແຫ່ງຂໍ້ມູນ: http://asmc.asean.org/files/msscommunity/hotspots/DailyJP1NOAA20.lao_pdr.txt

ປະກອບໂດຍ: ກຊສ MONRE ສະຖາບັນຄົ້ນຄວ້າ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກຊສ

ມາດຕະການ ສະກັດກັ້ນ ແລະ ຕ້ານ ໄຟໄໝ້ປ່າ

1. ເກັບກຳຂໍ້ມູນ ບຸກຄົນ, ນິຕິບຸກຄົນ ທີ່ມີການ ຈັບຈອງທີ່ດິນ, ຖາງປ່າ ເພື່ອທຳການຜະລິດກະສິກຳ ຢູ່ໃນຂອບເຂດທີ່ດິນປ່າໄມ້ ເພື່ອກຳນົດເປັນເຂດທີ່ມີຄວາມສ່ຽງ ທີ່ຈະເກີດໄຟໄໝ້ລາມປ່າ;
2. ຈັດຕັ້ງທີມງານສະເພາະກິດຢູ່ແຕ່ລະ ບ້ານ ແລະ ເມືອງ ທີ່ມີຄວາມສ່ຽງ ຈະເກີດໄຟໄໝ້ລາມປ່າ, ປະກອບ ຫຼື ລະດົມ ອັດຖຸປະກອນ, ພາຫະນະ ເພື່ອລົງກວດກາລາດຕະເວນ, ເຝົ້າລະວັງ ແລະ ສະກັດກັ້ນ ໄຟໄໝ້ປ່າ
3. ຖ້າພົບເຫັນການຖາງປ່າ ເພື່ອທຳການຜະລິດກະສິກຳ ຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕ້ອງໄດ້ເຮັດບົດບັນທຶກ ແລະ ບໍ່ອະນຸຍາດໃຫ້ຈູດ, ໃນກໍລະນີ ຈູດແລ້ວ ແມ່ນບໍ່ໃຫ້ທຳການຜະລິດ, ຫາກຜູ້ໃດລະເມີດ ແມ່ນຕ້ອງໄດ້ດຳເນີນຄະດີ ຢ່າງເຂັ້ມງວດ;
4. ໂຄສະນາເຜີຍແຜ່, ບົດແນະນຳ ດ້ານເຕັກນິກວິຊາການ, ການຕິດຕາມ, ການເຝົ້າລະວັງ, ມາດຕະການ, ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ປ່າ ໃຫ້ປະຊາຊົນທີ່ອາໄສ ຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ.

ມາດຕະການ ມອດໄຟປ່າ

1. ການມອດໄຟໄໝ້ປ່າ ໄດ້ກະກຽມອັດຖຸປະກອນ ເຊັ່ນ ຈົກ, ຊ້ອມ, ຄາດ, ຖັງ ສີດນ້ຳ, ຈັກຕັດໄມ້, ຂວານ, ເລື່ອຍ ແລະ ອັດຖຸປະກອນມອດໄຟອື່ນໆທີ່ຈຳເປັນ ດ້ວຍການສ້າງແລວກັນໄຟ
2. ຖ້າຫາກເກີດມີໄຟໄໝ້ປ່າ ຢູ່ໃນເຂດປ່າໄມ້ຂອງ ບ້ານ ແລະ ເມືອງ ແມ່ນມອບໃຫ້ ທີມງານສະເພາະກິດທ້ອງຖິ່ນ ສົມທົບກັບອົງການປົກຄອງ ບ້ານ ຫຼື ເມືອງ ນັ້ນເປັນ ເຈົ້າການປຸກລະດົມ ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະ ກຳລັງອື່ນໆ ຊ່ວຍກັນດັບມອດໄຟ ແລະ ໃຫ້ຖືເອົາວຽກງານດັ່ງກ່າວ ເປັນພັນທະໜ້າທີ່ຂອງທ້ອ ປອງຊົນ;
3. ໃນກໍລະນີ ໄຟໄໝ້ປ່າຢ່າງຮຸນແຮງ ແລະ ເປັນບໍລິເວນກວ້າງ, ເຂົ້າຫາໄດ້ຍາກ ຕ້ອງ ໄດ້ປະສານຫາພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ກຳລັງປ້ອງກັນຊາດ, ປ້ອງກັນ ຄວາມສະຫງົບ ແລະ ແຂວງທີ່ໃກ້ຄຽງ ເພື່ອຂໍຄວາມຊ່ວຍເຫຼືອໃນການດັບມອດ ໄຟຢ່າງທັນການ.







ມາດຕະການ ຕໍ່ຜູ້ລະເມີດ

1. ໃຫ້ເຈົ້າໜ້າທີ່ປ່າໄມ້ ປະສານສົມທົບກັບເຈົ້າໜ້າທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ ດຳເນີນການເກັບກຳຂໍ້ມູນ, ສາເຫດທີ່ເກີດມີການຖາງປ່າ, ຈູດປ່າ ທີ່ເຮັດໃຫ້ໄຟໄໝ້ລາມປ່າ ແລະ ນຳເອົາຜູ້ທີ່ກ່ຽວຂ້ອງກັບເຫດການດັ່ງກ່າວ ມາດຳເນີນຄະດີຕາມ ກົດໝາຍ ແລະ ລະບຽບການ.
2. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາຫຍຸ້ງຍາກແນວໃດ ໃຫ້ລາຍງານ ກະຊວງກະສິກຳ ແລະ ປ່າໄມ້, ເຈົ້າແຂວງ, ເຈົ້າຄອງ, ເຈົ້າເມືອງ, ເຈົ້ານະຄອນ ຕາມ ການແບ່ງຂັ້ນຄຸ້ມຄອງ ເພື່ອໃຫ້ທິດຊີ້ນຳຢ່າງທັນການ.

ກຳນົດເຂດທີ່ມີຄວາມສ່ຽງ ຕໍ່ການບຸກລຸກປ່າໄມ້ ແລະ ໄຟໄໝ້ລາມປ່າ

ການກຳນົດ ແລະ ສ້າງແຜນທີ່ ເຂດທີ່ມີຄວາມສ່ຽງຕໍ່ການເກີດໄຟປ່າ

ຄວາມສຳຄັນຂອງແຜນທີ່ ເຂດທີ່ມີຄວາມສ່ຽງຕໍ່ການເກີດໄຟປ່າ:

•(ກ່ອນເກີດໄຟປ່າ) ແຜນທີ່ຄວາມສ່ຽງ ແມ່ນມີຄວາມສຳຄັນຫຼາຍຕໍ່ ປະຊາຊົນ, ອົງການປົກຄອງ ແລະ ທຸກໆພາກສ່ວນທີ່ກ່ຽວຂ້ອງ ໃນການ ວາງແຜນ (ສ້າງແລວກັນໄຟ, ກວດກາລາດຕະເວນ), ຄາດຄະເນ ງົບປະມານ ແລະ ຈຳນວນພົນ ເຂົ້າໃນການປະຕິບັດວຽກງານ ຢູ່ເຂດທີ່ມີ ຄວາມສ່ຽງສູງຕໍ່ການເກີດໄຟ ເພື່ອເຝົ້າລະວັງ;

•(ຫຼັງເກີດໄຟປ່າ) ແຜນທີ່ດັ່ງກ່າວຍັງສາມາດຊ່ວຍຫຼຸດຜ່ອນຄວາມສ່ຽງໃຫ້ ທີມງານດັບມອດໄຟປ່າ ແລະ ກຳນົດມາດຕະການສະກັດທີ່ເໝາະສົມ ໃນຄະນະທີ່ປະຕິບັດໜ້າທີ່ດັບມອດໄຟ.

•ແຜນທີ່ດັ່ງກ່າວແມ່ນອີງໃສ່ຫຼາຍປັດໃຈ ເຊັ່ນ

1. ເນື້ອທີ່ປ່າໄມ້ ຕິດກັບ ຫຼື ໃກ້ຄຽງກັບ ເຂດທີ່ດິນກະສິກຳ ຫຼື
2. ເຂດທີ່ຢູ່ອາໃສ ຫຼື
3. ເຂດທີ່ເປັນປ່າເຫຼົ້າແກ່ອາຍຸ 3-5 ປີ ຕາມຮອມວຽນຂອງການເຮັດໄຮ່

ປັດໃຈ ຫຼື ສາເຫດ ທີ່ອາດຈະພາໃຫ້ເກີດໄຟໄໝ້ລາມປ່າ

1. ເນື້ອທີ່ປ່າໄມ້ ຫຼື ປ່າເຫຼົ້າ ທີ່ມີຂອບເຂດຕິດກັບ ຫຼື ໃກ້ຄຽງເຂດທີ່ດິນກະສິກຳ
2. ເນື້ອທີ່ປ່າໄມ້ ຫຼື ປ່າເຫຼົ້າ ທີ່ມີຂອບເຂດຕິດກັບ ຫຼື ໃກ້ຄຽງເຂດທີ່ຢູ່ອາໃສ
3. ເນື້ອທີ່ປ່າເຫຼົ້າແກ່ (ອາຍຸ 3-5 ປີ)
4. ??
5. ???

ລ/ດ	ປັດໃຈ (Factor)	ນ້ຳໜັກທາງດ້ານປັດໃຈ (Weighted Factor)
1	ເນື້ອທີ່ປ່າໄມ້ ຫຼື ປ່າເຫຼົ້າ ທີ່ມີຂອບເຂດຕິດກັບ ຫຼື ໃກ້ຄຽງເຂດທີ່ດິນກະສິກຳ	0,5
2	ເນື້ອທີ່ປ່າໄມ້ ຫຼື ປ່າເຫຼົ້າ ທີ່ມີຂອບເຂດຕິດກັບໃກ້ຄຽງເຂດທີ່ຢູ່ອາໃສ	0,3
3	ເນື້ອທີ່ປ່າເຫຼົ້າແກ່ (ອາຍຸ 3 – 5 ປີ)	0,2
4	…	…
5	…	…
ລວມ		1

ວຽກງານສຶກສາຄົ້ນຄວ້າ

1. ມີການສຶກສາກ່ຽວກັບສາເຫດທີ່ເຮັດໃຫ້ມີການຈູດ ເຊັ່ນ: ການຈູດປ່າເພື່ອກະຕຸ້ນໃຫ້ຫຍ້າ (ຫຍ້າປູກ ແລະ ຫຍ້າທຳມະຊາດ) ເກີດເພື່ອລ້ຽງງົວ, ການຖາງປ່າ ແລະ ຈູດ ເພື່ອເພີ່ມທາດອາຫານ ແລະ ຄວບຄຸມວັດສະພືດ ເພື່ອປູກເຂົ້າ, ແລະ ອື່ນໆ
2. ມີເຕັກນິກຄູ່ມືແນະນຳການຜະລິດກະສິກຳ, ການກະກຽມດິນ ແລະ ການຄຸ້ມຄອງປ່າໄມ້ ທີ່ຫຼີກລ່ຽງການຈູດ ອັນເປັນສາເຫດທີ່ເຮັດໃຫ້ມີມົນລະພິດທາງອາກາດ

ສິ່ງທ້າທາຍກ່ຽວກັບການຫລຸດຜ່ອນມົນລະພິດທາງອາກາດທີ່ເກີດຈາກການປູກຝັງ

- ຄວາມຮູ້, ການສຶກສາ ຫລື ການຄົ້ນຄວ້າຍັງມີຂີດຈຳກັດກ່ຽວກັບເຕັກນິກເພື່ອນຳໃຊ້ເຂົ້າໃນການທົດແທນການຈູດ ທັງກ່ອນ ແລະ ຫລັງການຜະລິດ ແລະ ການສົ່ງເສີມການນຳໃຊ້ຊີວະວິທະຍາ ເພື່ອຮັກສານິເວດຂອງດິນ ໃນການປູກຝັງຍັງມີຂີດຈຳກັດ
- ຍັງຂາດເຄື່ອງມື ແລະ ວິທີການ, ສະຖານທີ່ໃນການຈັດການພັດສຸດອັນຕະລາຍ (ຕຸກ ຫລື ແກ້ວຢາເຄມີ) ພາຍຫລັງໃຊ້ໃນການກະເສດ
- ການເຂົ້າເຖິງຂໍ້ມູນ ແລະ ຄວາມຮູ້ຂອງຊາວກະສິກອນຍັງມີຂີດຈຳກັດ ໂດຍສະເພາະແມ່ນເຕັກນິກ ແລະ ຄວາມເຂົ້າໃຈກ່ຽວກັບການຫລຸດຜ່ອນມົນລະພິດທາງອາກາດ

ຂໍ້ສະເໜີ

- ສົ່ງເສີມການສຶກສາຄົ້ນຄວ້າ ເພື່ອຫາວິທີການຫລຸດຜ່ອນການຈູດກ່ອນເຮັດການຜະລິດ ຫລື ການຮັກສາມີເວດວິທະຍາຂອງດິນໃຫ້ມີຄວາມອຸດົມສົມບູນ ໃຫ້ເໝາະສົມແຕ່ລະຊະນິດພືດ (ການເພີ່ມທາດອາຫານໃນດິນ, ການປູກພືດແບບປະສົມປະສານ ແລະ ອື່ນໆ ເພື່ອສ້າງລາຍຮັບທີ່ໝັ້ນຄົງໃຫ້ແກ່ຊາວກະສິກອນ)
- ການສ້າງຟາມຕົວ ແລະ ຖ່າຍທອດເຕັກນິກໃຫ້ແກ່ຊາວກະສິກອນ ເພື່ອປູກຈິດສຳນຶກກ່ຽວກັບຜົນຮ້າຍ ແລະ ການຫລຸດຜ່ອນມົນລະພິດທາງອາກາດ
- ສ້າງສະຖານທີ່ ແລະ ພັດທະນາຄູ່ມືກ່ຽວກັບການຈັດການພັດສະດຸທີ່ອັນຕະລາຍ ແລະ ບໍ່ອັນຕະລາຍ ທີ່ຖືກຕ້ອງ
- ສ້າງແຫລ່ງຂໍ້ມູນ ເພື່ອໃຫ້ປະຊາຊົນເຂົ້າເຖິງຂໍ້ມູນໄດ້ງ່າຍ ແລະ ທັນກັບສະພາບການ


ຂອບໃຈ
Shot on OnePlus
By Somphavy Keoka
Shot on OnePlus
By Somphavy Keoka
Shot on OnePlus
By Somphavy Keoka
Shot on OnePlus
By Somphavy Keoka